ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ ເລກທີ 141 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 28 ກັນຍາ 2023

# ລັດຖະດຳລັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
### ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ອົງການກວດກາແຫ່ງລັດ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ) ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍການກວດກາລັດ (ສະບັບປັບປຸງ) ສະບັບເລກທີ 25/ສພຊ, ລົງວັນທີ 29 ທັນວາ 2022 ແລະ ກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ (ສະບັບປັບປຸງ) ສະບັບເລກທີ 27/ສພຊ, ລົງວັນທີ 18 ທັນວາ 2012;
- ອີງຕາມ ໜັງສືສະເໜີ ຂອງປະທານອົງການກວດກາແຫ່ງລັດ ສະບັບເລກທີ 228 /ອກຫລ, ລົງວັນທີ 09 ສິງຫາ 2023.

**ປະທານປະເທດ**
**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ລັດຖະດຳລັດສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງ ໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ອົງການກວດກາແຫ່ງລັດ ແນໃສ່ຈັດຕັ້ງປະຕິບັດວຽກງານຂອງຕົນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.



สแกนด้วย CamScanner

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ອົງການກວດກາແຫ່ງລັດ ຂຽນເປັນຕົວອັກສອນຫຍໍ້ວ່າ (ອກຫລ) ແມ່ນອົງການລັດຂັ້ນສູນກາງ ຂຶ້ນກັບການຊີ້ນໍາໂດຍກົງຂອງປະທານປະເທດ ມີພາລະບົດບາດ ເປັນເສນາທິການໃຫ້ປະທານປະເທດ ກ່ຽວກັບວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາ ແລະ ແກ້ໄຂຄໍາສະເໜີ ຕາມໜ້າທີ່, ຂອບເຂດສິດ ຂອງຕົນ ແລະ ນໍາພາ, ຊີ້ນໍາວຽກງານດັ່ງກ່າວໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ອົງການກວດກາແຫ່ງລັດ ມີໜ້າທີ່ດັ່ງນີ້:

1. ປະຕິບັດລັດຖະທໍາມະນູນ, ກົດໝາຍ, ມະຕິຂອງສະພາແຫ່ງຊາດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
2. ຄົ້ນຄວ້າ, ສ້າງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍ ກ່ຽວກັບວຽກງານກວດກາ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ເພື່ອສະເໜີປະທານປະເທດ ພິຈາລະນາ;
3. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍ ເປັນແຜນການ, ແຜນງານ, ໂຄງການ ລະອຽດຂອງອົງການຕົນ ເພື່ອຈັດຕັ້ງປະຕິບັດ;
4. ໂຄສະນາເຜີຍແຜ່ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານກວດກາ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ;
5. ນໍາພາ, ຊີ້ນໍາ ການຈັດຕັ້ງປະຕິບັດວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ໃນຂອບເຂດທົ່ວປະເທດ;
6. ກວດກາ ການປະຕິບັດນະໂຍບາຍ, ກົດໝາຍ, ແຜນການ, ແຜນງານ ຕາມພາລະບົດບາດ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງຂັ້ນກະຊວງ, ຂັ້ນແຂວງ ແລະ ອົງການຈັດຕັ້ງອື່ນ ທີ່ນໍາໃຊ້ຊັບສິນ ແລະ ງົບປະມານຂອງລັດ;
7. ກວດກາ ການນໍາໃຊ້ສິດ, ການປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບຂອງສະມາຊິກລັດຖະບານ, ຫົວໜ້າອົງການ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ຮອງລັດຖະມົນຕີ, ຮອງຫົວໜ້າອົງການ, ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ, ພະນັກງານ-ລັດຖະກອນ, ທະຫານ, ຕໍາຫຼວດ, ພະນັກງານວິສາຫະກິດ ແລະ ຜູ້ໄດ້ຮັບມອບສິດຈາກທາງການ ຂັ້ນສູນກາງຄຸ້ມຄອງ;
8. ກວດກາ ວຽກງານທີ່ພົວພັນເຖິງຄວາມຮັບຜິດຊອບຄຸ້ມຄອງ ຂອງຫຼາຍກະຊວງ, ອົງການ, ແຂວງ ແລະ ນະຄອນຫຼວງ;
9. ພິຈາລະນາ ແລະ ແກ້ໄຂຄໍາສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
10. ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ດໍາເນີນການສືບສວນ-ສອບສວນ ຄະດີສໍ້ລາດບັງຫຼວງ, ຄະດີຟອກເງິນ ທີ່ຕິດພັນກັບການສໍ້ລາດບັງຫຼວງ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ແລະ ກົດໝາຍອື່ນ ທີ່ກ່ຽວຂ້ອງ;



สแกนด้วย CamScanner

11. ກວດກາຕາມມະຕິຂອງກອງປະຊຸມສະພາແຫ່ງຊາດ, ມະຕິຂອງຄະນະປະຈໍາສະພາແຫ່ງຊາດ ແລະ ຕາມຄໍາສະເໜີຂອງອົງການກວດສອບແຫ່ງລັດ;
12. ຕິດຕາມ, ກວດກາ, ຊຸກຍູ້ ການປະຕິບັດຜົນຂອງການກວດກາຕາມຜົນຂອງການກວດສອບ, ຕາມມະຕິຂອງກອງປະຊຸມສະພາແຫ່ງຊາດ, ມະຕິຂອງຄະນະປະຈໍາສະພາແຫ່ງຊາດ;
13. ລາຍງານ ແລະ ສະເໜີຄໍາເຫັນ ຕໍ່ລັດຖະບານ ແລະ ຂັ້ນເທິງ ຂອງເປົ້າໝາຍຖືກກວດກາ ໃນກໍລະນີບໍ່ເປັນເອກະພາບກັນ ຫຼື ຍັງມີຄໍາເຫັນທີ່ແຕກຕ່າງກັນ ກ່ຽວກັບການຕົກລົງແກ້ໄຂຜົນຂອງການກວດກາ ກ່ອນການລາຍງານ ຕໍ່ປະທານປະເທດ ແລະ/ຫຼື ຄະນະປະຈໍາສະພາແຫ່ງຊາດ ພິຈາລະນາຕົກລົງ;
14. ກວດກາ ໂຄງການລົງທຶນຂອງລັດ ຕາມແຜນການ, ແຜນງານ, ໂຄງການ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນ;
15. ພົວພັນ ແລະ ປະສານສົມທົບກັບອົງການຈັດຕັ້ງຂອງລັດຂັ້ນສູນກາງ ແລະ ທ້ອງຖິ່ນ, ອົງການກວດສອບແຫ່ງລັດ ແລະ ກວດສອບເອກະລາດ ກ່ຽວກັບການດໍາເນີນການກວດກາ, ການແກ້ໄຂ ແລະ ການປະຕິບັດຜົນຂອງການກວດກາ ຕາມພາລະບົດບາດຂອງຕົນ;
16. ກວດກາ ການຈັດຕັ້ງປະຕິບັດຜົນຂອງການກວດກາ ຢູ່ຂັ້ນກະຊວງ, ຂັ້ນແຂວງ ແລະ ການປະຕິບັດຄໍາຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ກ່ຽວກັບຄະດີສໍ້ລາດບັງຫຼວງ ແລະ ຄະດີການຟອກເງິນ ທີ່ຕິດພັນກັບການສໍ້ລາດບັງຫຼວງ;
17. ກວດກາ ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ລັດ ທີ່ມີພຶດຕິກໍາເລີ່ນເລີ້, ເມີນເສີຍ, ຂາດຄວາມຮັບຜິດຊອບ, ຂາດຈັນຍາບັນ, ຈັນຍາທໍາໃນວິຊາຊີບ ຊຶ່ງພາໃຫ້ເກີດຜົນເສຍຫາຍແກ່ຊັບສິນ ຂອງລັດ, ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທໍາ ຂອງພົນລະເມືອງ;
18. ຕິດຕາມ, ກວດກາ, ຊຸກຍູ້ ບັນດາກະຊວງ, ອົງການ ແລະ ທ້ອງຖິ່ນ ໃນການເຄື່ອນໄຫວວຽກງານ ຕາມຄວາມຮັບຜິດຊອບຂອງຕົນ;
19. ກວດກາ ການແຈ້ງຊັບສິນ ແລະ ລາຍຮັບ ຂອງພະນັກງານ-ລັດຖະກອນ, ທະຫານ, ຕໍາຫຼວດ, ພະນັກງານວິສາຫະກິດຂອງລັດ ຂັ້ນສູນກາງຄຸ້ມຄອງ;
20. ປັບປຸງການຈັດຕັ້ງ ແລະ ສ້າງ, ບໍາລຸງ, ຍົກລະດັບ ແລະ ປະຕິບັດນະໂຍບາຍ ຫຼື ລົງວິໄນຕໍ່ພະນັກງານ-ລັດຖະກອນກວດກາລັດ;
21. ປະສານສົມທົບກັບກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາ ແລະ ແກ້ໄຂຄໍາສະເໜີ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
22. ລາຍງານຜົນຂອງການກວດກາ ແລະ ແຜນການ ປະຈໍາປີ, ຫ້າປີ ຕໍ່ກອງປະຊຸມສະພາແຫ່ງຊາດ ຫຼື ຄະນະປະຈໍາສະພາແຫ່ງຊາດ ພິຈາລະນາ;
23. ພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ຕາມພາລະບົດບາດ ແລະ ຕາມການມອບໝາຍ ຂອງປະທານປະເທດ;
24. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານກວດກາລັດ ໃຫ້ປະທານປະເທດ ແລະ ສະພາແຫ່ງຊາດ ຢ່າງເປັນປົກກະຕິ;
25. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ ຂອງປະທານປະເທດ.



สแกนด้วย CamScanner

**ມາດຕາ 4 ຂອບເຂດສິດ**

ອົງການກວດກາແຫ່ງລັດ ມີສິດດັ່ງນີ້:

1. ສະເໜີ ປະທານປະເທດ ພິຈາລະນາ ປັບປຸງເນື້ອໃນ ຂອງລັດຖະທຳມະນູນ; ສ້າງ, ປັບປຸງ ກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບວຽກງານກວດກາລັດ, ການສະກັດກັ້ນ-ຕ້ານການສໍ້ລາດບັງຫຼວງ, ການພິຈາລະນາ ແລະ ແກ້ໄຂຄຳສະເໜີ ຂອງພົນລະເມືອງ;
2. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານກວດກາລັດ, ວຽກງານສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ວຽກງານພິຈາລະນາ ແລະ ແກ້ໄຂຄຳສະເໜີ;
3. ງົດການປະຕິບັດ, ລົບລ້າງ ຫຼື ຍົກເລີກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ຫຼື ນິຕິກຳອື່ນ ຂອງອົງການກວດກາລັດຂັ້ນລຸ່ມ ທີ່ຂັດກັບກົດໝາຍ ຫຼື ຂັດກັບນິຕິກຳ ຂອງອົງການກວດກາລັດ ຂັ້ນເທິງ;
4. ອອກຄຳສັ່ງ ເປີດ ຫຼື ບໍ່ເປີດ ການສືບສວນ-ສອບສວນ, ພາຕົວ, ກັກຕົວ, ດຳເນີນການສືບສວນ-ສອບສວນ ພະນັກງານຂັ້ນສູນກາງຄຸ້ມຄອງ ແລະ ສະຫຼຸບຜົນຂອງການສືບສວນ-ສອບສວນ ພ້ອມທັງປະກອບສຳນວນຄະດີ ສົ່ງໃຫ້ອົງການໄອຍະການປະຊາຊົນ ສັ່ງຟ້ອງຂຶ້ນສານ ກ່ຽວກັບຄະດີການສໍ້ລາດບັງຫຼວງ ແລະ ຄະດີຟອກເງິນ ທີ່ຕິດພັນກັບການສໍ້ລາດບັງຫຼວງ;
5. ສະເໜີ ປະທານປະເທດ ຕົກລົງດຳເນີນການກວດກາ ກະຊວງ, ອົງການ, ຄະນະເລຂາທິການ, ກຳມາທິການສະພາແຫ່ງຊາດ, ອົງການປົກຄອງ ຂັ້ນແຂວງ, ລັດວິສາຫະກິດ ແລະ ພະນັກງານຂັ້ນສູນກາງຄຸ້ມຄອງ ເມື່ອມີປາກົດການລະເມີດກົດໝາຍ;
6. ສະເໜີ ນາຍົກລັດຖະມົນຕີ ພິຈາລະນາຕົກລົງແກ້ໄຂຜົນຂອງການກວດກາ ໃນຂອບເຂດການຄຸ້ມຄອງຂອງລັດຖະບານ;
7. ສະເໜີ ຕໍ່ລັດຖະມົນຕີ, ຫົວໜ້າອົງການ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ດຳເນີນການກວດກາ ໃນຂອບເຂດການຄຸ້ມຄອງຂອງກະຊວງ, ອົງການ, ແຂວງ, ນະຄອນຫຼວງ;
8. ສະເໜີ ຕໍ່ອົງການທີ່ກ່ຽວຂ້ອງ ພິຈາລະນາຄືນ ບັນຫາທີ່ບໍ່ເອກະພາບ ລະຫວ່າງ ຫົວໜ້າກົມກວດກາລັດຂັ້ນກະຊວງ ກັບລັດຖະມົນຕີ, ຫົວໜ້າອົງການ, ປະທານອົງການກວດກາລັດ ຂັ້ນແຂວງ ກັບເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ກ່ຽວກັບການພິຈາລະນາຜົນການກວດກາ;
9. ສະເໜີຄະນະປະຈຳສະພາແຫ່ງຊາດ ໂຈະ ຫຼື ຍົກເລີກ ການຈັດຕັ້ງປະຕິບັດນິຕິກຳ ຂອງລັດຖະບານ, ປະທານສານປະຊາຊົນສູງສຸດ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ທັງໝົດ ແລະ ບາງສ່ວນ ທີ່ຂັດກັບລັດຖະທຳມະນູນ ແລະ ກົດໝາຍ;
10. ສະເໜີລັດຖະບານ ໂຈະ ຫຼື ຍົກເລີກ ການຈັດຕັ້ງປະຕິບັດນິຕິກຳ ຂອງກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ທັງໝົດ ຫຼື ບາງສ່ວນ ທີ່ຂັດກັບລັດຖະທຳມະນູນ ແລະ ກົດໝາຍ;
11. ສະເໜີສ້າງຕັ້ງ ຫຼື ຍຸບເລີກ ກົງຈັກການຈັດຕັ້ງທີ່ຂຶ້ນກັບ ອົງການກວດກາແຫ່ງລັດ ຕໍ່ປະທານປະເທດ;
12. ສະເໜີປະທານປະເທດ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງຮອງປະທານ ອົງການກວດກາແຫ່ງລັດ;
13. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ, ປະຕິບັດນະໂຍບາຍຍ້ອງຍໍ ຫຼື ລົງວິໄນ ຕໍ່ພະນັກງານ-ລັດຖະກອນຂອງອົງການກວດກາແຫ່ງລັດ ທີ່ຂຶ້ນກັບຄວາມຮັບຜິດຊອບ ແລະ ຂອບເຂດສິດຂອງຕົນ;



สแกนด้วย CamScanner

14. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານ, ຮອງປະທານ ອົງການກວດກາລັດ ຂັ້ນແຂວງ ແລະ ປະທານ ອົງການກວດກາລັດ ຂັ້ນເມືອງ;
15. ຮຽກເຊີນ ເປົ້າໝາຍທີ່ຖືກກວດກາ, ການຈັດຕັ້ງທີ່ກ່ຽວຂ້ອງ, ພະຍານ, ຜູ້ຊ່ຽວຊານ, ຜູ້ຍື່ນຄຳສະເໜີ ເພື່ອມາລາຍງານ, ໃຫ້ຄຳຊີ້ແຈງ, ອະທິບາຍ ພ້ອມທັງປະກອບເອກະສານ, ຫຼັກຖານ ຫຼື ຂໍ້ມູນທີ່ກ່ຽວຂ້ອງກັບການກວດກາ;
16. ທວງເອົາ ເອກະສານ, ຫຼັກຖານ ແລະ ຂໍ້ມູນຕ່າງໆ ກ່ຽວກັບການກວດກາ ຈາກບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ;
17. ສະເໜີໃຫ້ອົງການທີ່ກ່ຽວຂ້ອງ ປະຕິບັດມາດຕະການ ຕໍ່ຜູ້ກະທຳຜິດ ຕາມກົດໝາຍ;
18. ສະເໜີ ປະທານປະເທດ ຫຼື ຄະນະປະຈຳສະພາແຫ່ງຊາດ ຕົກລົງດຳເນີນການກວດກາ ຕໍ່ບຸກຄະລາກອນທີ່ສະພາແຫ່ງຊາດ ເລືອກຕັ້ງ ຫຼື ຮັບຮອງເອົາການແຕ່ງຕັ້ງ, ພະນັກງານຂອງສະພາແຫ່ງຊາດ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ ແລະ ອົງການກວດສອບແຫ່ງລັດ ທີ່ຄະນະປະຈຳສະພາແຫ່ງຊາດແຕ່ງຕັ້ງ ເມື່ອມີປາກົດການລະເມີດກົດໝາຍ;
19. ສະເໜີ ຄະນະປະຈຳສະພາແຫ່ງຊາດ ເປີດກອງປະຊຸມລົງມະຕິບໍ່ໄວ້ວາງໃຈ ຕໍ່ບຸກຄະລາກອນ ທີ່ສະພາແຫ່ງຊາດ ເລືອກຕັ້ງ ຫຼື ຮັບຮອງເອົາການແຕ່ງຕັ້ງ ເມື່ອມີການລະເມີດກົດໝາຍ;
20. ສະເໜີມາດຕະການ, ວິທີການແກ້ໄຂຜົນຂອງການກວດກາ ໃຫ້ການຈັດຕັ້ງຂັ້ນເທິງຂອງເປົ້າໝາຍຖືກກວດກາ ເພື່ອພິຈາລະນາຕົກລົງ ແລະ ລາຍງານໃຫ້ປະທານປະເທດ;
21. ສະເໜີໂຈະຊົ່ວຄາວ ການແຕ່ງຕັ້ງ, ສັບຊ້ອນ, ການຍົກຍ້າຍ, ສັບປ່ຽນ ຫຼື ການປະຕິບັດໜ້າທີ່ ຂອງພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ຂັ້ນສູນກາງຄຸ້ມຄອງ ທີ່ເປັນເປົ້າໝາຍຖືກກວດກາໃນໄລຍະເວລາດຳເນີນການກວດກາ ຫຼື ດຳເນີນການສືບສວນ-ສອບສວນ ບໍ່ທັນສຳເລັດ ບົນພື້ນຖານການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
22. ສະເໜີ ປະທານປະເທດ, ນາຍົກລັດຖະມົນຕີ, ລັດຖະມົນຕີ, ຫົວໜ້າອົງການ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ໂຈະການປະຕິບັດ ຫຼື ໃຫ້ພິຈາລະນາຄືນໃໝ່ ກ່ຽວກັບການຕົກລົງແກ້ໄຂຜົນຂອງການກວດກາ ທີ່ເຫັນວ່າບໍ່ຖືກຕ້ອງຕາມກົດໝາຍ ແລະ ລົງວິໄນ ຫຼື ດຳເນີນຄະດີຕໍ່ຫົວໜ້າອົງການຈັດຕັ້ງຂອງເປົ້າໝາຍຖືກກວດກາ ທີ່ບໍ່ແກ້ໄຂຜົນຂອງການກວດກາ ຫຼື ແກ້ໄຂບໍ່ຖືກຕ້ອງ ຕາມການຕົກລົງຂອງຂັ້ນເທິງ;
23. ສະເໜີ ປະທານປະເທດ, ນາຍົກລັດຖະມົນຕີ, ລັດຖະມົນຕີ, ຫົວໜ້າອົງການ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພິຈາລະນາແຕ່ງຕັ້ງຄະນະກວດກາ ຫຼື ຄະນະກວດກາສະເພາະກິດ ເພື່ອດຳເນີນການກວດກາ;
24. ເຂົ້າຮ່ວມຕິດຕາມ ແລະ ຊີ້ນຳກອງປະຊຸມວຽກງານກວດກາ ຂອງກະຊວງ, ອົງການ, ແຂວງ, ນະຄອນຫຼວງ ແລະ ເຂົ້າຮ່ວມຕິດຕາມກອງປະຊຸມເປີດກວ້າງ ຂອງລັດຖະບານ ຕາມການເຊີນ;
25. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍຂອງ ປະທານປະເທດ.



สแกนด้วย CamScanner

# ໝວດທີ 3
# ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

ອົງການກວດກາແຫ່ງລັດ ມີໂຄງປະກອບກົງຈັກ ດັ່ງນີ້:

1. ຫ້ອງການ;
2. ກົມຈັດຕັ້ງ-ພະນັກງານ;
3. ກົມຄົ້ນຄວ້າ ແລະ ວາລະສານກວດກາ;
4. ກົມຄົ້ນຄວ້າຄຳຮ້ອງ ແລະ ຄຳສະເໜີ;
5. ກົມກວດກາລັດ;
6. ກົມຕ້ານ ແລະ ສອບສວນການສໍ້ລາດບັງຫຼວງ;
7. ກົມຕິດຕາມ, ກວດກາການປະຕິບັດຜົນຂອງການກວດກາ;
8. ກົມພົວພັນຕ່າງປະເທດ.

ແຕ່ລະກົມ ປະກອບດ້ວຍ ພະແນກຈຳນວນໜຶ່ງ ຕາມຄວາມເໝາະສົມ.

ໃນກໍລະນີຈຳເປັນ ສາມາດສ້າງຕັ້ງເພີ່ມກົງຈັກຂັ້ນກົມ ໂດຍປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 6 ໂຄງປະກອບບຸກຄະລາກອນ**

ອົງການກວດກາແຫ່ງລັດ ມີໂຄງປະກອບບຸກຄະລາກອນ ດັ່ງລຸ່ມນີ້:

1. ປະທານ ອົງການກວດກາແຫ່ງລັດ ຖືກເລືອກຕັ້ງ ຫຼື ປົດຕຳແໜ່ງ ໂດຍກອງປະຊຸມສະພາແຫ່ງຊາດ ຕາມການສະເໜີຂອງປະທານປະເທດ; ມີອາຍຸການເທົ່າກັບ ອາຍຸການຂອງສະພາແຫ່ງຊາດແຕ່ລະຊຸດ, ມີຄວາມຮັບຜິດຊອບ ຕໍ່ປະທານປະເທດ, ສະພາແຫ່ງຊາດ ກ່ຽວກັບການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ຂອງຕົນ;
2. ຮອງປະທານ ອົງການກວດກາແຫ່ງລັດ ຈຳນວນໜຶ່ງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານປະເທດ ຕາມການສະເໜີຂອງປະທານອົງການກວດກາແຫ່ງລັດ;
3. ຫົວໜ້າຫ້ອງການ, ຫົວໜ້າກົມ ຂອງອົງການກວດກາແຫ່ງລັດ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານ ອົງການກວດກາແຫ່ງລັດ ພາຍຫຼັງມີຄວາມເປັນເອກະພາບກັບອົງການທີ່ກ່ຽວຂ້ອງ;
4. ຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມ ຂອງອົງການກວດກາແຫ່ງລັດ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານອົງການກວດກາແຫ່ງລັດ ບົນພື້ນຖານການເຫັນດີເປັນເອກະພາບກັບກະຊວງພາຍໃນ;
5. ຫົວໜ້າພະແນກ, ຮອງຫົວໜ້າພະແນກ ຂອງອົງການກວດກາແຫ່ງລັດ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານອົງການກວດກາແຫ່ງລັດ ຕາມການສະເໜີຂອງກົມຈັດຕັ້ງ-ພະນັກງານ ບົນພື້ນຖານການເຫັນດີເປັນເອກະພາບກັບຫົວໜ້າຫ້ອງການ, ກົມທີ່ກ່ຽວຂ້ອງ;
6. ລັດຖະກອນວິຊາການ ຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ.



สแกนด้วย CamScanner

**ມາດຕາ 7 ສິດ ແລະ ໜ້າທີ່ ຂອງປະທານ ອົງການກວດກາແຫ່ງລັດ**

ປະທານ ອົງການກວດກາແຫ່ງລັດ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ນຳພາ, ຊີ້ນຳ ການຈັດຕັ້ງປະຕິບັດວຽກງານກວດກາ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງໃນຂອບເຂດທົ່ວປະເທດ;
2. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ;
3. ງົດການປະຕິບັດ, ລົບລ້າງ ຫຼື ຍົກເລີກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ຫຼື ນິຕິກຳອື່ນ ຂອງອົງການກວດກາລັດຂັ້ນລຸ່ມ ທີ່ຂັດກັບກົດໝາຍ ຫຼື ຂັດກັບນິຕິກຳ ຂອງອົງການກວດກາລັດ ຂັ້ນເທິງ;
4. ຕົກລົງດຳເນີນການກວດກາ ຕາມພາລະບົດບາດ, ສິດ, ໜ້າທີ່ ຂອງຕົນ. ໃນກໍລະນີ ບັນຫາການຕົກລົງນັ້ນຫາກເກີນສິດ ແລະ ໜ້າທີ່ ຂອງຕົນ ຕ້ອງສະເໜີຕໍ່ປະທານປະເທດ ເພື່ອພິຈາລະນາຕົກລົງ;
5. ອອກຄຳສັ່ງ ເປີດ ຫຼື ບໍ່ເປີດ ການສືບສວນ-ສອບສວນ ຄະດີສໍ້ລາດບັງຫຼວງ ແລະ ຄະດີຟອກເງິນ ທີ່ຕິດພັນກັບການສໍ້ລາດບັງຫຼວງ;
6. ສະເໜີ ປະທານປະເທດ ຕົກລົງດຳເນີນການກວດກາ ກະຊວງ, ອົງການ, ຄະນະເລຂາທິການ, ກຳມາທິການສະພາແຫ່ງຊາດ, ອົງການປົກຄອງ ຂັ້ນແຂວງ, ລັດວິສາຫະກິດ ແລະ ພະນັກງານຂັ້ນສູນກາງຄຸ້ມຄອງ ເມື່ອມີປາກົດການລະເມີດກົດໝາຍ;
7. ສະເໜີ ນາຍົກລັດຖະມົນຕີ ພິຈາລະນາຕົກລົງແກ້ໄຂຜົນການກວດກາ ໃນຂອບເຂດການຄຸ້ມຄອງ ຂອງລັດຖະບານ;
8. ສະເໜີ ຕໍ່ລັດຖະມົນຕີ, ຫົວໜ້າອົງການ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ດຳເນີນການກວດກາ ໃນຂອບເຂດການຄຸ້ມຄອງຂອງກະຊວງ, ອົງການ, ແຂວງ, ນະຄອນຫຼວງ;
9. ສະເໜີ ອົງການທີ່ກ່ຽວຂ້ອງ ພິຈາລະນາຄືນ ບັນຫາທີ່ບໍ່ເອກະພາບ ລະຫວ່າງ ຫົວໜ້າກົມກວດກາລັດຂັ້ນກະຊວງ ກັບລັດຖະມົນຕີ, ຫົວໜ້າອົງການ, ປະທານອົງການກວດກາລັດ ຂັ້ນແຂວງ ກັບເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ກ່ຽວກັບການພິຈາລະນາຜົນຂອງການກວດກາ;
10. ສະເໜີ ຄະນະປະຈຳສະພາແຫ່ງຊາດ ໂຈະ ຫຼື ຍົກເລີກ ການຈັດຕັ້ງປະຕິບັດນິຕິກຳ ຂອງລັດຖະບານ, ປະທານສານປະຊາຊົນສູງສຸດ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ທັງໝົດ ແລະ ບາງສ່ວນ ທີ່ຂັດກັບລັດຖະທຳມະນູນ ແລະ ກົດໝາຍ;
11. ສະເໜີ ລັດຖະບານ ໂຈະ ຫຼື ຍົກເລີກ ການຈັດຕັ້ງປະຕິບັດນິຕິກຳ ຂອງກະຊວງ, ອົງການປົກຄອງທ້ອງຖິ່ນທັງໝົດ ແລະ ບາງສ່ວນ ທີ່ຂັດກັບລັດຖະທຳມະນູນ ແລະ ກົດໝາຍ;
12. ສະເໜີປະທານປະເທດ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງຮອງປະທານ ອົງການກວດກາແຫ່ງລັດ;
13. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ, ປະຕິບັດນະໂຍບາຍຍ້ອງຍໍ ຫຼື ລົງວິໄນ ຕໍ່ພະນັກງານ-ລັດຖະກອນຂອງອົງການກວດກາແຫ່ງລັດ ທີ່ຂຶ້ນກັບຄວາມຮັບຜິດຊອບ ແລະ ຂອບເຂດສິດຂອງຕົນ;
14. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານ, ຮອງປະທານອົງການກວດກາລັດ ຂັ້ນແຂວງ ແລະ ປະທານອົງການກວດກາລັດ ຂັ້ນເມືອງ;



สแกนด้วย CamScanner

15. ລາຍງານ ແລະ ສະເໜີຄຳເຫັນ ຕໍ່ລັດຖະບານ ແລະ ຂັ້ນເທິງ ຂອງເປົ້າໝາຍຖືກກວດກາ ໃນກໍລະນີ ບໍ່ເປັນເອກະພາບກັນ ຫຼື ຍັງມີຄຳເຫັນທີ່ແຕກຕ່າງກັນ ກ່ຽວກັບການຕົກລົງແກ້ໄຂຜົນການກວດກາ ກ່ອນການລາຍງານຕໍ່ ປະທານປະເທດ ແລະ/ຫຼື ຄະນະປະຈຳສະພາແຫ່ງຊາດ ພິຈາລະນາຕົກລົງ;
16. ລາຍງານຜົນການກວດກາ ແລະ ແຜນການ ປະຈຳປີ, ຫ້າປີ ຕໍ່ກອງປະຊຸມສະພາແຫ່ງຊາດ ຫຼື ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ;
17. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 8 ສິດ ແລະ ໜ້າທີ່ ຂອງຮອງປະທານ ອົງການກວດກາແຫ່ງລັດ**

ຮອງປະທານ ອົງການກວດກາແຫ່ງລັດ ມີ ສິດ ແລະ ໜ້າທີ່ ຊ່ວຍປະທານ ອົງການກວດກາແຫ່ງລັດ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງປະທານ. ໃນກໍລະນີ ປະທານບໍ່ຢູ່ ຫຼື ຕິດຂັດ ຮອງປະທານ ຜູ້ໄດ້ຮັບມອບໝາຍຈາກ ປະທານ ເປັນຜູ້ຮັກສາການແທນ.

## ໝວດທີ 4
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 9 ຫຼັກການ**

ອົງການກວດກາແຫ່ງລັດ ເຄື່ອນໄຫວຕາມຫຼັກການດັ່ງນີ້:

1. ອົງການກວດກາແຫ່ງລັດ ເຄື່ອນໄຫວ ແລະ ປະຕິບັດໜ້າທີ່ ຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ ກ່ຽວກັບບັນຫາລວມ ຂອງອົງການກວດກາແຫ່ງລັດ;
2. ປະຕິບັດລະບອບຫົວໜ້າດຽວ, ມີການແບ່ງງານ ແບ່ງຄວາມຮັບຜິດຊອບ ໃຫ້ບຸກຄົນໃນໝູ່ຄະນະຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງພະນັກງານ-ລັດຖະກອນທຸກລະດັບ;
3. ທຸກການເຄື່ອນໄຫວ ຂອງອົງການກວດກາແຫ່ງລັດ ແລະ ພະນັກງານ-ລັດຖະກອນ ແມ່ນອີງໃສ່ກົດໝາຍ, ລະບຽບການ ແລະ ຫຼັກການລວມຂອງລັດ; ນຳເອົາແນວທາງແຜນນະໂຍບາຍ ຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ ມາຜັນຂະຫຍາຍຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

**ມາດຕາ 10 ແບບແຜນວິທີເຮັດວຽກ**

ອົງການກວດກາແຫ່ງລັດ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ, ມີການກຳນົດ ແລະ ແກ້ໄຂວຽກຢ່າງມີຈຸດສຸມ ແລະ ມີເປົ້າໝາຍແຕ່ລະໄລຍະ;
2. ເຮັດວຽກມີການຕິດຕາມ, ກວດກາ, ຊຸກຍູ້, ສະຫຼຸບ, ປະເມີນຜົນ ແລະ ຖອດຖອນບົດຮຽນເປັນປົກກະຕິ ປະຈຳເດືອນ, ສາມ ເດືອນ, ຫົກ ເດືອນ, ໜຶ່ງ ປີ ແລະ ຫ້າ ປີ;
3. ປະສານສົມທົບກັບ ອົງການກວດສອບແຫ່ງລັດ, ອົງການໄອຍະການປະຊາຊົນສູງສຸດ, ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ, ອົງການກວດກາລັດ ແຕ່ລະຂັ້ນ ແນໃສ່ໝູນໃຊ້ກຳລັງແຮງຂອງທຸກພາກສ່ວນເຂົ້າໃນການເຄື່ອນໄຫວວຽກງານຕິດຕາມ, ກວດກາການແກ້ໄຂຜົນຂອງການກວດກາ ແລະ ເພື່ອພັດທະນາວຽກງານຂອງ ຂະແໜງການກວດກາລັດ;
4. ປະຕິບັດລະບອບລົງເຄື່ອນໄຫວຕິດຕາມ, ຊຸກຍູ້ວຽກງານກວດກາລັດ ແລະ ຕ້ານການສໍ້ລາດບັງຫຼວງ ຢູ່ບັນດາກະຊວງ, ອົງການ ແລະ ທ້ອງຖິ່ນ ເປັນປົກກະຕິ;



สแกนด้วย CamScanner

5. ປະຕິບັດລະບອບລາຍງານ, ຂໍຄຳເຫັນຈາກ ປະທານປະເທດ ແລະ ຄະນະປະຈຳສະພາແຫ່ງຊາດເປັນປົກກະຕິ; ໃນກໍລະນີມີບັນຫາຮີບດ່ວນ ກໍລາຍງານຂໍທິດຊີ້ນຳໃຫ້ທັນເວລາ;
6. ປະຕິບັດລະບອບດຳເນີນຊີວິດການເມືອງເປັນປົກກະຕິ, ດຳເນີນກອງປະຊຸມວຽກງານກວດກາ ທົ່ວປະເທດ ປີລະເທື່ອ; ຈັດກອງປະຊຸມຄົບຄະນະເດືອນລະເທື່ອ ແລະ ໃນກໍລະນີມີວຽກຈຳເປັນຮີບດ່ວນ ກໍສາມາດຈັດກອງປະຊຸມວິສາມັນໄດ້.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 11 ງົບປະມານ ແລະ ຕາປະທັບ**

ອົງການກວດກາແຫ່ງລັດ ມີງົບປະມານ ເປັນຫົວໜ່ວຍ ງົບປະມານຂັ້ນໜຶ່ງ ຮ່ວມກັບຄະນະກວດກາສູນກາງພັກ, ມີງົບປະມານນຳໃຊ້ໃນກໍລະນີເຄື່ອນໄຫວຕາມຄຳສັ່ງຂອງຂັ້ນເທິງ ແລະ ມີຕາປະທັບເປັນຂອງຕົນ ເພື່ອນຳໃຊ້ເຂົ້າໃນວຽກງານທາງລັດຖະການ.

**ມາດຕາ 12 ເຄື່ອງໝາຍ, ເຄື່ອງແບບ ແລະ ກາໝາຍ**

ອົງການກວດກາແຫ່ງລັດ ມີເຄື່ອງໝາຍ ແລະ ພະນັກງານ-ລັດຖະກອນກວດກາລັດ ມີເຄື່ອງແບບ, ກາໝາຍ.

**ມາດຕາ 13 ການຜັນຂະຫຍາຍ**

ມອບໃຫ້ປະທານອົງການກວດກາແຫ່ງລັດ ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການ ແລະ ບັນດາກົມ ຕາມທີ່ກຳນົດໄວ້ໃນມາດຕາ 5 ຂອງລັດຖະດຳລັດສະບັບນີ້ ໃຫ້ລະອຽດຈະແຈ້ງ, ຮັດກຸມ ແລະ ເໝາະສົມ ເພື່ອຮັບໃຊ້ແກ່ການເຄື່ອນໄຫວວຽກງານໃຫ້ໄດ້ຮັບຜົນດີ.

**ມາດຕາ 14 ການຈັດຕັ້ງປະຕິບັດ**

ອົງການກວດກາແຫ່ງລັດ, ອົງການຈັດຕັ້ງລັດ ແຕ່ລະຂັ້ນ, ການຈັດຕັ້ງຕ່າງໆ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ອຳນວຍຄວາມສະດວກ ໃນການຈັດຕັ້ງປະຕິບັດລັດຖະດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 15 ຜົນສັກສິດ**

ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການກວດກາລັດ ແລະ ຕ້ານການສໍ້ລາດບັງຫຼວງ ສະບັບເລກທີ 29/ອກຫລ, ລົງວັນທີ 24 ກຸມພາ 2022.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບລັດຖະດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານປະເທດ ແຫ່ງ ສປປ ລາວ**

ທອງລຸນ ສີສຸລິດ



สแกนด้วย CamScanner